## ສາລະບານ


ກົດໝາຍວ່າດ້ວຍ ອົງການໄອຍະການປະຊາຊົນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ..........4
ພາກທີ I ບົດບັນຍັດທົ່ວໄປ ..........4
ມາດຕາ 1. ຈຸດປະສົງຂອງກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ..........4
ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດຂອງອົງການໄອຍະການປະຊາຊົນ..........4
ມາດຕາ 3. ສິດ ແລະ ໜ້າທີ່ຂອງອົງການໄອຍະການປະຊາຊົນ ..........4
ມາດຕາ 4. ຫຼັກການຈັດຕັ້ງ ແລະການເຄື່ອນໄຫວຂອງອົງການໄອຍະການປະຊາຊົນ ..........5
ມາດຕາ 5. ການພິຈາລະນາຄໍາສະເໜີ ແລະ ຄໍາຮ້ອງທຸກ..........5
ພາກທີ II ການຕິດຕາມກວດກາຂອງໄອຍະການປະຊາຊົນ ..........6
ໝວດທີ I ການຕິດຕາມກວດກາທົ່ວໄປ..........6
ມາດຕາ 6. ຈຸດປະສົງຂອງການຕິດຕາມກວດກາທົ່ວໄປ..........6
ມາດຕາ 7. ສິດ ແລະ ໜ້າທີ່ຂອງໄອຍະການປະຊາຊົນໃນການຕິດຕາມກວດກາທົ່ວໄປ ..........6
ມາດຕາ 8. ຜົນບັງຄັບໃນການປະຕິບັດນິຕິກໍາຂອງໄອຍະການປະຊາຊົນ ..........7
ໝວດທີ II ການຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນ..........7
ມາດຕາ 9. ຈຸດປະສົງຂອງການຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-
ສອບສວນ..........7
ມາດຕາ 10. ສິດ ແລະ ໜ້າທີ່ຂອງໄອຍະການປະຊາຊົນ
ໃນການຕິດຕາມກວດກາການປະຕິບັດກົດໝາຍ ຂອງ ອົງການສືບສວນ-ສອບສວນ..........7
ມາດຕາ 11. ຜົນບັງຄັບໃນການປະຕິບັດຄໍາສັ່ງ ແລະ ຄໍາແນະນໍາຂອງໄອຍະການປະຊາຊົນ ..........8
ໝວດທີ IIIການຕິດຕາມກວດກາການປະຕິບັດກົດໝາຍໃນການດໍາເນີນຄະດີຢູ່ສານ
ແລະ ການປະ ຕິບັດຄໍາຕັດສິນຂອງສານ..........8
ມາດຕາ 12. ຈຸດປະສົງຂອງການຕິດຕາມກວດກາການປະຕິບັດກົດໝາຍໃນການດໍາເນີນຄະດີຢູ່ ສານ
ແລະ ການປະຕິບັດຄໍາຕັດສິນຂອງສານ ..........8
ມາດຕາ 13. ສິດ ແລະ ໜ້າທີ່ຂອງໄອຍະການປະຊາຊົນໃນການຕິດຕາມກວດກາ
ການປະຕິບັດກົດໝາຍໃນການ ດໍາເນີນຄະດີຢູ່ສານ..........8
ມາດຕາ 14. ສິດ ແລະ ໜ້າທີ່ຂອງໄອຍະການປະຊາຊົນ
ໃນການຕິດຕາມກວດກາການປະຕິບັດຄໍາຕັດສິນ ຂອງສານ ..........9
ມາດຕາ 15. ການເຂົ້າຮ່ວມກອງປະຊຸມໃຫຍ່ຂອງຜູ້ພິພາກສາ..........9
ໝວດທີ IVການຕິດຕາມກວດກາການປະຕິບັດກົດໝາຍໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ,..........10
ສູນດັດສ້າງ, ຄ້າຍດັດສ້າງ ແລະ ສະຖານທີ່ປະຕິບັດມາດຕະການບັງຄັບອື່ນໆຂອງສານ..........10
ມາດຕາ 16. ຈຸດປະສົງຂອງການຕິດຕາມກວດກາການປະຕິບັດກົດໝາຍ
ໃນສະຖານທີ່ກັກຕົວ, ສະຖານທີ່ ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ ແລະ

ສະຖານທີ່ປະຕິບັດມາດຕະການບັງຄັບອື່ນໆຂອງ ສານ ..........10
ມາດຕາ 17. ສິດ ແລະ ໜ້າທີ່ຂອງໄອຍະການປະຊາຊົນ ໃນການຕິດຕາມກວດກາ
ການປະຕິບັດກົດໝາຍ ໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ
ແລະ ສະຖານທີ່ປະຕິ ບັດ ມາດຕະການບັງຄັບອື່ນໆຂອງສານ ..........10
ມາດຕາ 18. ຄວາມຮັບຜິດຊອບໃນການສົ່ງຄໍາສະເໜີ, ຄໍາຮ້ອງທຸກຂອງຜູ້ກະທໍາຜິດ
ທີ່ສົ່ງເຖິງໄອຍະການ ປະຊາຊົນ ..........11
ພາກທີ III ການຄົ້ນຄວ້າໃຫ້ອະໄພຍະໂທດແກ່ນັກໂທດ..........11
ມາດຕາ 19 . ສິດ ແລະ ໜ້າທີ່ຂອງໄອຍະການປະຊາຊົນສູງສຸດ ກ່ຽວກັບ
ການຄົ້ນຄວ້າສະເໜີການໃຫ້ອະໄພຍະໂທດແກ່ນັກໂທດ..........11
ພາກທີ IV ລະບົບການຈັດຕັ້ງອົງການໄອຍະການປະຊາຊົນແຫ່ງ ສາທາລະນະລັດ
ປະຊາທິປະໄຕ ປະຊາຊົນລາວ ..........11
ມາດຕາ 20. ລະບົບການຈັດຕັ້ງອົງການໄອຍະການປະຊາຊົນ ..........11
ໝວດທີ I ອົງການໄອຍະການປະຊາຊົນສູງສຸດ ..........12
ມາດຕາ 21. ທີ່ຕັ້ງ ແລະ ພາລະບົດບາດຂອງອົງການໄອຍະການປະຊາຊົນສູງສຸດ ..........12
ມາດຕາ 22. ສະຖານທີ່ຕັ້ງອົງການໄອຍະການປະຊາຊົນສູງສຸດ..........12
ມາດຕາ 23. ໂຄງປະກອບຂອງອົງການໄອຍະການປະຊາຊົນສູງສຸດ..........12
ມາດຕາ 24. ສິດ ແລະ ໜ້າທີ່ຂອງອົງການໄອຍະການປະຊາຊົນສູງສຸດ..........12
ມາດຕາ 25. ການເລືອກຕັ້ງ ຫຼື ປົດຕໍາແໜ່ງໄອຍະການປະຊາຊົນສູງສຸດ ..........13
ມາດຕາ 26. ສິດ ແລະ ໜ້າທີ່ຂອງໄອຍະການປະຊາຊົນສູງສຸດ ..........13
ມາດຕາ 27. ຮອງໄອຍະການປະຊາຊົນສູງສຸດ ..........13
ມາດຕາ 28. ໂຄງປະກອບກົງຈັກຂອງອົງການໄອຍະການປະຊາຊົນສູງສຸດ ..........14
ໝວດທີ II ອົງການໄອຍະການປະຊາຊົນຂັ້ນອຸທອນ..........14
ມາດຕາ 29. ທີ່ຕັ້ງ ແລະ ພາລະບົດບາດຂອງອົງການໄອຍະການປະຊາຊົນຂັ້ນອຸທອນ..........14
ມາດຕາ 30. ການສ້າງຕັ້ງອົງການໄອຍະການປະຊາຊົນຂັ້ນອຸທອນ..........14
ມາດຕາ 31. ໂຄງປະກອບຂອງອົງການໄອຍະການປະຊາຊົນຂັ້ນອຸທອນ ..........14
ມາດຕາ 32. ສິດ ແລະ ໜ້າທີ່ຂອງອົງການໄອຍະການປະຊາຊົນຂັ້ນອຸທອນ ..........15
ມາດຕາ 33. ສິດ ແລະ ໜ້າທີ່ຂອງໄອຍະການປະຊາຊົນຂັ້ນອຸທອນ..........15
ມາດຕາ 34. ຮອງໄອຍະການປະຊາຊົນຂັ້ນອຸທອນ..........15
ມາດຕາ 35. ກົງຈັກຊ່ວຍວຽກຂອງອົງການໄອຍະການປະຊາຊົນຂັ້ນອຸທອນ ..........15
ໝວດທີ III ອົງການໄອຍະການປະຊາຊົນແຂວງ, ນະຄອນ..........16
ມາດຕາ 36. ທີ່ຕັ້ງ ແລະ ພາລະບົດບາດຂອງອົງການໄອຍະການປະຊາຊົນແຂວງ, ນະຄອນ ..........16
ມາດຕາ 37. ການສ້າງຕັ້ງອົງການໄອຍະການປະຊາຊົນແຂວງ, ນະຄອນ ..........16
ມາດຕາ 38. ໂຄງປະກອບຂອງອົງການໄອຍະການປະຊາຊົນແຂວງ, ນະຄອນ..........16
ມາດຕາ 39. ສິດ ແລະ ໜ້າທີ່ຂອງອົງການໄອຍະການປະຊາຊົນແຂວງ, ນະຄອນ ..........16

ມາດຕາ 40. ສິດ ແລະ ໜ້າທີ່ຂອງໄອຍະການປະຊາຊົນແຂວງ, ນະຄອນ ....................................16
ມາດຕາ 41. ຮອງໄອຍະການປະຊາຊົນແຂວງ, ນະຄອນ ....................................17
ມາດຕາ 42. ກົງຈັກຊ່ວຍວຽກຂອງອົງການໄອຍະການປະຊາຊົນແຂວງ, ນະຄອນ....................................17
ໝວດທີ IV ອົງການໄອຍະການປະຊາຊົນເມືອງ, ເທດສະບານ....................................17
ມາດຕາ 43. ທີ່ຕັ້ງ ແລະ ພາລະບົດບາດຂອງອົງການໄອຍະການປະຊາຊົນເມືອງ, ເທດສະບານ ......17
ມາດຕາ 44. ການສ້າງຕັ້ງອົງການໄອຍະການປະຊາຊົນເມືອງ, ເທດສະບານ ....................................17
ມາດຕາ 45. ໂຄງປະກອບຂອງອົງການໄອຍະການປະຊາຊົນເມືອງ, ເທດສະບານ....................................18
ມາດຕາ 46. ສິດ ແລະ ໜ້າທີ່ຂອງອົງການໄອຍະການປະຊາຊົນເມືອງ, ເທດສະບານ....................................18
ມາດຕາ 47. ສິດ ແລະ ໜ້າທີ່ຂອງໄອຍະການປະຊາຊົນເມືອງ, ເທດສະບານ ....................................18
ມາດຕາ 48. ຮອງໄອຍະການປະຊາຊົນເມືອງ, ເທດສະບານ ....................................18
ມາດຕາ 49. ກົງຈັກຊ່ວຍວຽກຂອງອົງການໄອຍະການປະຊາຊົນເມືອງ, ເທດສະບານ....................................18
ພາກທີ V ໄອຍະການ ແລະ ພະນັກງານສອບສວນ....................................19
ມາດຕາ 50. ເງື່ອນໄຂ ແລະ ມາດຕະຖານຂອງໄອຍະການປະຊາຊົນ ແລະ ພະນັກງານສອບສວນ ...19
ມາດຕາ 51. ສິດ ແລະ ໜ້າທີ່ຂອງພະນັກງານສອບສວນ ....................................19
ພາກທີ VI ງົບປະມານ, ເຄື່ອງແບບ, ກາໝາຍ, ບັດປະຈຳຕົວ ແລະ ຕາປະທັບຂອງອົງການ
ໄອຍະການປະຊາຊົນ....................................19
ມາດຕາ 52. ງົບປະມານຂອງອົງການໄອຍະການປະຊາຊົນ....................................19
ມາດຕາ 53. ບັດປະຈຳຕົວ, ກາໝາຍ ແລະ ເຄື່ອງແບບຂອງໄອຍະການປະຊາຊົນ....................................20
ມາດຕາ 54. ຕາປະທັບຂອງອົງການໄອຍະການປະຊາຊົນສູງສຸດ
ແລະ ຂອງອົງການໄອຍະການປະຊາຊົນ ຂັ້ນລຸ່ມ. ....................................20
ພາກທີ VII ບົດບັນຍັດສຸດທ້າຍ ....................................20
ມາດຕາ 55. ການຈັດຕັ້ງປະຕິບັດ....................................20
ມາດຕາ 56. ຜົນສັກສິດ ....................................20

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະພາແຫ່ງຊາດ ເລກທີ 06/ ສພຊ

ນະຄອນຫລວງວຽງຈັນ, ວັນທີ 21 ຕຸລາ 2003

# ກົດໝາຍວ່າດ້ວຍ ອົງການໄອຍະການປະຊາຊົນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ພາກທີ I ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງຂອງກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ**

ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກຳນົດລະບຽບການ, ຫຼັກການກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການໄອຍະການປະຊາຊົນ ແນໃສ່ເພີ່ມທະວີນິຕິທຳ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ປົກປັກຮັກສາຜົນປະໂຫຍດຂອງອົງການຈັດຕັ້ງພັກ, ອົງການຈັດຕັ້ງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ວິສາຫະກິດ, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ.

**ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດຂອງອົງການໄອຍະການປະຊາຊົນ**

ອົງການໄອຍະການປະຊາຊົນ ແມ່ນອົງການອຳນາດແຫ່ງລັດ, ມີພາລະບົດບາດຕິດຕາມກວດກາການປະຕິບັດກົດໝາຍໃຫ້ຖືກຕ້ອງ ແລະ ເປັນເອກະພາບຂອງບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການທີ່ຂຶ້ນກັບລັດຖະບານ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ອົງການປົກຄອງທ້ອງຖິ່ນ, ວິສາຫະກິດ, ພົນລະເມືອງ ແລະ ປະຕິບັດສິດກ່າວຟ້ອງ.

**ມາດຕາ 3. ສິດ ແລະ ໜ້າທີ່ຂອງອົງການໄອຍະການປະຊາຊົນ**

ອົງການໄອຍະການປະຊາຊົນມີສິດ ແລະ ໜ້າທີ່ດັ່ງນີ້ :

1. ຕິດຕາມກວດກາການເຄົາລົບ ແລະ ປະຕິບັດລະບຽບກົດໝາຍໃຫ້ຖືກຕ້ອງ ແລະ ເປັນ ເອກະພາບຢູ່ໃນທຸກກະຊວງ, ອົງການທຽບເທົ່າກະຊວງ, ອົງການທີ່ຂຶ້ນກັບລັດຖະບານ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ອົງການປົກຄອງທ້ອງຖິ່ນ, ວິສາຫະກິດ ແລະ ພົນລະເມືອງ. ການຕິດຕາມກວດການີ້ ເອີ້ນວ່າການຕິດຕາມກວດກາທົ່ວໄປ;

2. ຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນ;
3. ຕິດຕາມກວດກາການປະຕິບັດກົດໝາຍໃນການດຳເນີນຄະດີຢູ່ສານ ແລະ ການປະຕິບັດຄຳຕັດສິນຂອງສານ;
4. ຕິດຕາມກວດກາການປະຕິບັດກົດໝາຍໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດ ສ້າງ, ຄ້າຍດັດສ້າງ ໃນເວລາປະຕິບັດໂທດຕັດອິດສະລະພາບ ແລະ ມາດຕະການບັງຄັບອື່ນໆຂອງສານ,
5. ຄົ້ນຄ້ວາສະເໜີການໃຫ້ອະໄພຍະໂທດແກ່ນັກໂທດ;
6. ດຳເນີນການຕ້ານອາດຊະຍາກຳ ແລະການລະເມີດກົດໝາຍອື່ນໆ ເພື່ອກຳຈັດ ແລະສະກັດກັ້ນການກະທຳຜິດ, ພ້ອມທັງລົບລ້າງບັນດາສາເຫດ ແລະເງື່ອນໄຂທີ່ພາໃຫ້ການກະທຳຜິດເກີດຂຶ້ນ;
7. ຮັບປະກັນການສືບສວນ-ສອບສວນຄະດີອາຍາໃຫ້ຄົບຖ້ວນ, ຮອບດ້ານ, ພາວະວິໄສ ແລະວາງມາດຕະການສະກັດກັ້ນການກະທຳຜິດ ໂດຍປະສານສົມທົບກັບບັນດາອົງການ ລັດ ແລະອົງການຈັດຕັ້ງອື່ນໆ;
8. ຮັບປະກັນໃຫ້ຜູ້ກະທຳຜິດຕ້ອງໄດ້ຮັບການລົງໂທດຕາມກົດໝາຍ ແລະ ບໍ່ໃຫ້ຜູ້ທີ່ບໍ່ໄດ້ກະທຳຜິດຖືກລົງໂທດ;
9. ດຳເນີນການສືບສວນ-ສອບສວນຄະດີໃດໜຶ່ງ, ບາງສ່ວນ ຫຼື ທັງໝົດ ທີ່ຕົກຢູ່ໃນສິດ ແລະໜ້າທີ່ຂອງຕົນ ຕາມທີ່ກົດໝາຍໄດ້ກຳນົດໄວ້.
10. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມທີ່ກົດໝາຍໄດ້ກຳນົດໄວ້.

**ມາດຕາ 4. ຫຼັກການຈັດຕັ້ງ ແລະການເຄື່ອນໄຫວຂອງອົງການໄອຍະການປະຊາຊົນ**

ອົງການໄອຍະການປະຊາຊົນຂັ້ນຕ່າງໆ ປະກອບເປັນລະບົບອົງການໄອຍະການປະຊາຊົນເອກະພາບ ແລະ ລວມສູນ, ນຳພາໂດຍໄອຍະການປະຊາຊົນສູງສຸດ, ໄອຍະການຂັ້ນລຸ່ມຂຶ້ນກັບໄອຍະການຂັ້ນເທິງ. ໃນເວລາປະຕິບັດໜ້າທີ່ຂອງຕົນນັ້ນ ໄອຍະການປະຊາຊົນທ້ອງຖິ່ນ ມີແຕ່ປະຕິບັດຕາມກົດ ໝາຍ ແລະ ຄຳສັ່ງຂອງໄອຍະການປະຊາຊົນສູງສຸດເທົ່ານັ້ນ.

ອົງການໄອຍະການປະຊາຊົນ ເຄື່ອນໄຫວບົນພື້ນຖານນິຕິທຳ ໂດຍສອດຄ່ອງກັບກົດໝາຍແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ຮັບປະກັນການປະຕິບັດກົດໝາຍໃຫ້ຖືກຕ້ອງ ແລະເປັນເອກະພາບ ໂດຍປະສານສົມທົບກັບອົງການປົກຄອງທ້ອງຖິ່ນ, ວາງມາດຕະການທີ່ຈຳເປັນ ເພື່ອຊອກໃຫ້ເຫັນການລະເມີດກົດໝາຍ ແລະ ລົບລ້າງທຸກການລະເມີດກົດໝາຍ, ຟື້ນຟູສິດຂອງພົນລະ ເມືອງທີ່ໄດ້ຖືກລະເມີດ ແລະ ດຳເນີນການສັ່ງຟ້ອງຜູ້ກະທຳຜິດຂຶ້ນສານ.

ການເຄື່ອນໄຫວຂອງອົງການໄອຍະການປະຊາຊົນ ເປັນການປະກອບສ່ວນເຂົ້າໃນການສຶກສາອົບຮົມພົນລະເມືອງ ໃຫ້ມີສະຕິເຄົາລົບ ແລະ ປະຕິບັດກົດໝາຍ, ລະບຽບການດຳລົງຊີວິດໃນສັງຄົມ.

**ມາດຕາ 5. ການພິຈາລະນາຄຳສະເໜີ ແລະ ຄຳຮ້ອງທຸກ**

ໄອຍະການປະຊາຊົນທຸກຂັ້ນ ພິຈາລະນາແກ້ໄຂຄຳສະເໜີ ແລະ ຄຳຮ້ອງທຸກຂອງພົນລະເມືອງ, ຄຳ

ສະເໜີຂອງອົງການຈັດຕັ້ງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມຕາມກຳນົດເວລາທີ່ກົດໝາຍໄດ້ກຳນົດໄວ້, ວາງມາດຕະການທີ່ຈຳເປັນເພື່ອຟື້ນຟູສິດທີ່ໄດ້ຖືກລະເມີດ ແລະ ເພື່ອປົກປັກຮັກສາສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ ແລະ ອົງການຈັດຕັ້ງດັ່ງກ່າວ.

# ພາກທີ II ການຕິດຕາມກວດກາຂອງໄອຍະການປະຊາຊົນ

## ໝວດທີ I ການຕິດຕາມກວດກາທົ່ວໄປ

### ມາດຕາ 6. ຈຸດປະສົງຂອງການຕິດຕາມກວດກາທົ່ວໄປ

ໃນຂອບເຂດສິດ ແລະ ໜ້າທີ່ຂອງຕົນ ໄອຍະການປະຊາຊົນສູງສຸດ ແລະ ໄອຍະການປະຊາຊົນຂັ້ນລຸ່ມ ດຳເນີນການຕິດຕາມກວດກາການປະຕິບັດກົດໝາຍຂອງບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການທີ່ຂຶ້ນກັບລັດຖະບານ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ອົງການປົກຄອງທ້ອງຖິ່ນ, ວິສາຫະກິດ ແລະ ພົນລະເມືອງ ເພື່ອໃຫ້ຖືກຕ້ອງ ແລະ ເປັນເອກະພາບ; ຕິດຕາມກວດກາການອອກນິຕິກຳຂອງບັນດາອົງການຈັດຕັ້ງດັ່ງກ່າວ ເພື່ອໃຫ້ສອດຄ່ອງກັບກົດໝາຍ.

### ມາດຕາ 7. ສິດ ແລະ ໜ້າທີ່ຂອງໄອຍະການປະຊາຊົນໃນການຕິດຕາມກວດກາທົ່ວໄປ

ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໄອຍະການປະຊາຊົນມີສິດ ແລະ ໜ້າທີ່ ດັ່ງນີ້:

1. ທວງເອົາຂໍ້ຕົກລົງ, ຄຳສັ່ງ ແລະ ນິຕິກຳອື່ນໆຂອງກະຊວງ, ອົງການທຽບເທົ່າກະຊວງ, ອົງການທີ່ຂຶ້ນກັບລັດຖະບານ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ອົງການປົກຄອງທ້ອງຖິ່ນ, ວິສາຫະກິດ ເພື່ອກວດກາບັນດານິຕິກຳດັ່ງກ່າວ ໃຫ້ສອດຄ່ອງກັບກົດໝາຍ;
2. ກວດກາການປະຕິບັດກົດໝາຍຂອງອົງການລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ວິສາຫະກິດ ແລະ ລັດຖະກອນ ຕາມຄຳຮ້ອງທຸກຂອງພົນລະເມືອງ. ຖ້າຫາກເຫັນວ່າມີການກະທຳທີ່ບໍ່ຖືກຕ້ອງຕາມກົດໝາຍ ຕ້ອງໄດ້ສະເໜີໃຫ້ອົງການກ່ຽວຂ້ອງແກ້ໄຂ. ໃນກໍລະນີທີ່ເປັນການກະທຳຜິດທາງອາຍາ ໄອຍະການຕ້ອງດຳ ເນີນຄະດີ;
3. ຮຽກບຸກຄົນທີ່ກ່ຽວຂ້ອງມາອະທິບາຍກ່ຽວກັບການລະເມີດກົດໝາຍ;
4. ສະເໜີໂຈະ ຫຼື ລົບລ້າງນິຕິກຳຂອງບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການທີ່ຂຶ້ນກັບລັດຖະບານ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ອົງການປົກຄອງທ້ອງຖິ່ນ, ວິສາຫະກິດ ທີ່ບໍ່ສອດຄ່ອງກັບກົດໝາຍ ຕໍ່ອົງການຈັດ ຕັ້ງດັ່ງກ່າວ ຫຼື ຕໍ່ອົງການຈັດຕັ້ງຂັ້ນເທິງທີ່ກ່ຽວຂ້ອງ.

   ຄຳສະເໜີຂອງໄອຍະການປະຊາຊົນ ຕ້ອງໄດ້ຮັບການພິຈາລະນາຢ່າງຊ້າບໍ່ໃຫ້ກາຍສາມສິບວັນ ນັບແຕ່ວັນທີ່ໄດ້ຮັບຄຳສະເໜີນັ້ນເປັນຕົ້ນໄປ;
5. ສະເໜີຕໍ່ອົງການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການ

ຈັດຕັ້ງສັງຄົມ ແລະ ວິສາຫະກິດ ກ່ຽວກັບການຈຳກັດ ແລະ ລົບລ້າງການລະເມີດກົດ ໝາຍ, ສາເຫດ ແລະ ເງື່ອນໄຂທີ່ພາໃຫ້ການກະທຳຜິດເກີດຂຶ້ນ;

6. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມທີ່ກົດໝາຍໄດ້ກຳນົດໄວ້.

### ມາດຕາ 8. ຜົນບັງຄັບໃນການປະຕິບັດນິຕິກຳຂອງໄອຍະການປະຊາຊົນ

ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການຂອງໄອຍະການປະຊາຊົນທຸກຂັ້ນ ທີ່ວາງອອກໃນຂອບເຂດ ສິດ ແລະ ໜ້າທີ່ຂອງຕົນ ມີຜົນບັງຄັບປະຕິບັດສຳລັບທຸກອົງການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ວິສາຫະກິດ ແລະ ພົນລະເມືອງ.

## ໝວດທີ II ການຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນ

### ມາດຕາ 9. ຈຸດປະສົງຂອງການຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນ

ໄອຍະການປະຊາຊົນສູງສຸດ ແລະ ໄອຍະການປະຊາຊົນຂັ້ນລຸ່ມ ດຳເນີນການຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນເພື່ອ:

1. ຄົ້ນຄ້ວາໃຫ້ເຫັນທຸກການກະທຳຜິດທີ່ເກີດຂຶ້ນ ແລະ ບໍ່ໃຫ້ຜູ້ກະທຳຜິດນັ້ນ ພົ້ນຈາກການລົງ ໂທດຕາມກົດໝາຍ;
2. ບໍ່ໃຫ້ບຸກຄົນໃດບຸກຄົນໜຶ່ງ ຖືກລົງໂທດທາງອາຍາໂດຍບໍ່ມີຫຼັກຖານ ຫຼື ບໍ່ຖືກຕ້ອງຕາມກົດ ໝາຍ ຫຼື ຖືກຈຳກັດສິດອື່ນໆ ຢ່າງຜິດກົດໝາຍ;
3. ໃຫ້ການກັກຕົວ, ການຈັບຕົວ, ການກັກຂັງຜູ້ກະທຳຜິດຖືກຕ້ອງຕາມກົດໝາຍ ແລະ ບໍ່ໃຫ້ມີການຈັບຕົວ, ການກັກຂັງ ແລະ ການກວດຄົ້ນເຄຫະສະຖານ ໂດຍບໍ່ມີຄຳສັ່ງຂອງໄອຍະການ ຫຼື ຂອງສານ ເວັ້ນເສຍແຕ່ການຈັບຕົວ ຫຼື ການກວດຄົ້ນເຄຫະສະຖານ ໃນກໍລະນີທີ່ມີການກະທຳຜິດເຊິ່ງໜ້າ ຫຼື ຮີບດ່ວນ;
4. ໃຫ້ອົງການສືບສວນ-ສອບສວນ ປະຕິບັດລະບຽບກົດໝາຍໃນການດຳເນີນຄະດີອາຍາ ຢ່າງເຂັ້ມງວດ.

### ມາດຕາ 10. ສິດ ແລະ ໜ້າທີ່ຂອງໄອຍະການປະຊາຊົນ ໃນການຕິດຕາມກວດກາການປະຕິບັດກົດໝາຍ ຂອງອົງການສືບສວນ-ສອບສວນ

ໃນການຕິດຕາມກວດກາການປະຕິບັດກົດໝາຍ ຂອງອົງການສືບສວນ-ສອບສວນ ແລະ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໄອຍະການປະຊາຊົນ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ທວງເອົາສຳນວນຄະດີອາຍາ, ເອກະສານ, ຂອງກາງ ແລະ ຂໍ້ມູນຕ່າງໆກ່ຽວກັບການກະທຳຜິດ ຈາກອົງການສືບສວນ-ສອບສວນ ເພື່ອທຳການກວດກາ;
2. ເຂົ້າຮ່ວມການສືບສວນ-ສອບສວນຄະດີອາຍາ ແລະ ໃນກໍລະນີທີ່ຈຳເປັນ ຈະດຳເນີນການສືບສວນ-ສອບສວນດ້ວຍຕົນເອງກໍໄດ້. ໃນການສືບສວນ-ສອບສວນຄະດີນັ້ນ ໄອ

ຍະການປະຊາຊົນ ອາດຈະມອບໃຫ້ພະນັກງານສອບສວນ ດຳເນີນແທນຕົນກໍໄດ້;

3. ລົບລ້າງຄຳສັ່ງຂອງອົງການສືບສວນ-ສອບສວນ ທີ່ບໍ່ຖືກຕ້ອງຕາມກົດໝາຍ ຫຼື ບໍ່ມີເຫດຜົນ;
4. ໃຫ້ຄຳແນະນຳເປັນລາຍລັກອັກສອນ ກ່ຽວກັບການສືບສວນ-ສອບສວນຄະດີອາຍາ, ກ່ຽວກັບການສະກັດກັ້ນອາດຊະຍາກຳ, ການຕີຄວາມໝາຍຂອງການກະທຳຜິດ, ການປະຕິບັດມາດຕະການສືບສວນ-ສອບສວນ ແລະ ການຊອກຫາຜູ້ກະທຳຜິດ;
5. ອອກຄຳສັ່ງຈັບຕົວ, ກັກຂັງ, ພາຕົວ, ກວດຄົ້ນເຄຫະສະຖານ ກ່ຽວກັບການກະທຳຜິດທີ່ບໍ່ເຊິ່ງໜ້າ ຫຼື ໃນກໍລະນີບໍ່ຮີບດ່ວນ ແລະ ອອກຄຳສັ່ງປ່ອຍຕົວພາງ;
6. ຕໍ່ກຳນົດເວລາສືບສວນ-ສອບສວນ ແລະ ກຳນົດເວລາກັກຂັງ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ;
7. ສົ່ງສຳນວນຄະດີຄືນໃຫ້ອົງການສືບສວນ-ສອບສວນ ພ້ອມດ້ວຍຄຳແນະນຳກ່ຽວກັບການສືບສວນ-ສອບສວນເພີ່ມເຕີມ;
8. ສັ່ງໃຫ້ເຈົ້າໜ້າທີ່ສືບສວນ-ສອບສວນ ທີ່ໄດ້ລະເມີດກົດໝາຍໃນການດຳເນີນຄະດີ ຢຸດເຊົາການສືບສວນ - ສອບສວນ;
9. ເປີດການສືບສວນ-ສອບສວນ, ຊັດມ້ຽນຄະດີ ຫຼື ໂຈະການດຳເນີນຄະດີ, ທຳການສັ່ງຟ້ອງຂຶ້ນສານ ແລະ ສົ່ງສຳນວນຄະດີໄປຍັງສານ;
10. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມທີ່ກົດໝາຍໄດ້ກຳນົດໄວ້.

### ມາດຕາ 11. ຜົນບັງຄັບໃນການປະຕິບັດຄຳສັ່ງ ແລະ ຄຳແນະນຳຂອງໄອຍະການປະຊາຊົນ

ທຸກຄຳສັ່ງ ແລະ ຄຳແນະນຳຂອງໄອຍະການປະຊາຊົນ ທີ່ຖືກຕ້ອງຕາມກົດໝາຍນັ້ນ ມີຜົນບັງຄັບປະຕິບັດສຳລັບອົງການສືບສວນ-ສອບສວນ.

## ໝວດທີ III ການຕິດຕາມກວດກາການປະຕິບັດກົດໝາຍໃນການດຳເນີນຄະດີຢູ່ສານ ແລະ ການປະຕິບັດຄຳຕັດສິນຂອງສານ

### ມາດຕາ 12. ຈຸດປະສົງຂອງການຕິດຕາມກວດກາການປະຕິບັດກົດໝາຍໃນການດຳເນີນຄະດີຢູ່ ສານ ແລະ ການປະຕິບັດຄຳຕັດສິນຂອງສານ

ໄອຍະການປະຊາຊົນສູງສຸດ ແລະ ໄອຍະການປະຊາຊົນຂັ້ນລຸ່ມ ດຳເນີນການຕິດຕາມກວດກາການປະຕິບັດກົດໝາຍຢູ່ສານ ເພື່ອໃຫ້ຄະດີຖືກດຳເນີນໄປຢ່າງຮອບດ້ານ, ຄົບຖ້ວນ, ພາວະວິໄສ ແລະ ຖືກຕ້ອງຕາມຂັ້ນຕອນຂອງການດຳເນີນຄະດີ ເພື່ອໃຫ້ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາ ຂອງສານມີເຫດຜົນໜັກແໜ້ນ, ຖືກຕ້ອງຕາມກົດໝາຍ ແລະ ໄດ້ຮັບການປະຕິບັດຢ່າງຖືກຕ້ອງ.

### ມາດຕາ 13. ສິດ ແລະ ໜ້າທີ່ຂອງໄອຍະການປະຊາຊົນໃນການຕິດຕາມກວດກາການປະຕິບັດກົດໝາຍໃນການດຳເນີນຄະດີຢູ່ສານ

ໃນການຕິດຕາມກວດກາການປະຕິບັດກົດໝາຍໃນການດຳເນີນຄະດີຢູ່ສານ ແລະ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໄອຍະການປະຊາຊົນມີສິດ ແລະ ໜ້າທີ່ດັ່ງນີ້:

1. ຮ້ອງຟ້ອງຄະດີແພ່ງ ເພື່ອປົກປັກຮັກສາຜົນປະໂຫຍດຂອງລັດ ຫຼື ສັງຄົມ ຕາມທີ່ກົດໝາຍໄດ້ກຳນົດໄວ້;
2. ສະເໜີໃຫ້ສານປະຊາຊົນຂັ້ນຂອງຕົນ ສົ່ງສຳນວນຄະດີໃຫ້ຕົນ;
3. ເຂົ້າຮ່ວມໃນການດຳເນີນຄະດີອາຍາ ແລະ ແພ່ງ ຢູ່ທີ່ປະຊຸມສານ, ຖະແຫຼງໃຫ້ຄວາມເຫັນແກ່ສານ;
4. ສະເໜີຄັດຄ້ານຄຳຊີ້ຂາດ, ຄຳຕັດສິນ, ຄຳພິພາກສາຄະດີອາຍາ ຫຼື ຄະດີແພ່ງທີ່ຍັງບໍ່ທັນໃຊ້ໄດ້ຢ່າງເດັດຂາດ ຂອງສານປະຊາຊົນຂັ້ນຂອງຕົນ ທີ່ເຫັນວ່າບໍ່ມີເຫດຜົນໜັກແໜ້ນ ຫຼື ບໍ່ຖືກຕ້ອງຕາມກົດໝາຍ;
5. ສະເໜີຖອນຄຳສະເໜີຄັດຄ້ານຂອງຕົນກ່ອນສານຕັດສິນ;
6. ຮື້ຟື້ນຄະດີຄືນໃໝ່ ເມື່ອພົບເຫັນຂໍ້ມູນ ຫຼື ຫຼັກຖານໃໝ່;
7. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມທີ່ກົດໝາຍໄດ້ກຳນົດໄວ້.

**ມາດຕາ 14. ສິດ ແລະ ໜ້າທີ່ຂອງໄອຍະການປະຊາຊົນ ໃນການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານ**

ໃນການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານ ແລະ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໄອຍະການປະຊາຊົນມີສິດ ແລະ ໜ້າທີ່ດັ່ງນີ້:

1. ສະເໜີໃຫ້ພະນັກງານປະຕິບັດຄຳຕັດສິນຂອງສານ:
   - ລາຍງານສະພາບການປະຕິບັດຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາຂອງສານ;
   - ປະຕິບັດຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາທີ່ໃຊ້ໄດ້ຢ່າງເດັດຂາດຂອງສານ ຊຶ່ງຍັງບໍ່ທັນໄດ້ຮັບການປະຕິບັດ;
2. ສະເໜີປັບປຸງແປງ, ລົບລ້າງ ຫຼື ໂຈະການປະຕິບັດທີ່ບໍ່ຖືກຕ້ອງຕາມຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາຂອງສານ.

**ມາດຕາ 15. ການເຂົ້າຮ່ວມກອງປະຊຸມໃຫຍ່ຂອງຜູ້ພິພາກສາ**

ໄອຍະການປະຊາຊົນສູງສຸດເຂົ້າຮ່ວມກອງປະຊຸມໃຫຍ່ຂອງຜູ້ພິພາກສາ ເພື່ອຄົ້ນຄ້ວາກ່ຽວກັບການນຳໃຊ້ກົດໝາຍ ໃນການດຳເນີນ ແລະ ຕັດສິນຄະດີໃຫ້ຖືກຕ້ອງ ແລະ ເປັນເອກະພາບໃນທົ່ວປະເທດ.

ຖ້າເຫັນວ່າຄຳຕົກລົງຂອງກອງປະຊຸມໃຫຍ່ຂອງຜູ້ພິພາກສາ ຫາກບໍ່ສອດຄ່ອງກັບກົດໝາຍ ໄອຍະການປະຊາຊົນສູງສຸດ ລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ.

## ໝວດທີ IV ການຕິດຕາມກວດກາການປະຕິບັດກົດໝາຍໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ ແລະ ສະຖານທີ່ປະຕິບັດມາດຕະການບັງຄັບອື່ນໆຂອງສານ

**ມາດຕາ 16. ຈຸດປະສົງຂອງການຕິດຕາມກວດກາການປະຕິບັດກົດໝາຍ ໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ ແລະ ສະຖານທີ່ປະຕິບັດມາດຕະການບັງຄັບອື່ນໆຂອງ ສານ**

ການຕິດຕາມກວດກາການປະຕິບັດກົດໝາຍໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ ແລະ ສະຖານທີ່ປະຕິບັດມາດຕະການບັງຄັບອື່ນໆຂອງສານ ແມ່ນເພື່ອໃຫ້ປະຕິບັດຖືກຕ້ອງຕາມລະບຽບກົດໝາຍ ແລະ ເງື່ອນໄຂຂອງການກັກຕົວ, ການກັກຂັງ, ການດັດສ້າງ, ການປະຕິບັດໂທດຕັດອິດສາລະພາບ ແລະ ມາດຕະການບັງຄັບອື່ນໆຂອງສານ.

**ມາດຕາ 17. ສິດ ແລະ ໜ້າທີ່ຂອງໄອຍະການປະຊາຊົນ ໃນການຕິດຕາມກວດກາການປະຕິບັດກົດໝາຍໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ ແລະ ສະຖານທີ່ປະຕິ ບັດມາດຕະການບັງຄັບອື່ນໆຂອງສານ**

ໃນການຕິດຕາມກວດກາການປະຕິບັດກົດໝາຍ ໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ ແລະສະຖານທີ່ປະຕິບັດມາດຕະການບັງຄັບອື່ນໆຂອງສານ, ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໄອຍະການປະຊາຊົນມີສິດ ແລະ ໜ້າທີ່ດັ່ງນີ້:

1. ລົງກວດກາສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ ແລະ ສະຖານທີ່ປະຕິບັດມາດຕະການບັງຄັບອື່ນໆຂອງສານ ຢ່າງເປັນລະບົບ ຫຼື ໃນເວລາໃດກໍໄດ້ຕາມທີ່ກົດໝາຍໄດ້ກຳນົດໄວ້;
2. ກວດກາເອກະສານກ່ຽວກັບການກັກຕົວ, ການຈັບຕົວ, ການກັກຂັງ, ການດັດສ້າງ ແລະ ກວດກາການປະຕິບັດມາດຕະການບັງຄັບອື່ນໆຂອງສານ;
3. ສອບຖາມບຸກຄົນທີ່ຖືກກັກຕົວ, ຖືກຈັບຕົວ, ຖືກກັກຂັງ, ຖືກດັດສ້າງ, ຖືກປະຕິບັດມາດຕະການບັງຄັບອື່ນໆຂອງສານ;
4. ກວດກາການກະທຳຂອງເຈົ້າໜ້າທີ່ຕໍ່ບຸກຄົນທີ່ຖືກກັກຕົວ, ຖືກຈັບຕົວ, ຖືກກັກຂັງ, ຖືກດັດ ສ້າງ, ຖືກປະຕິບັດມາດຕະການບັງຄັບອື່ນໆຂອງສານ. ໃນກໍລະນີທີ່ພົບເຫັນການກະທຳຂອງເຈົ້າໜ້າທີ່ຫາກເປັນການລະເມີດຕໍ່ລະບຽບກົດໝາຍຕ້ອງຕັກເຕືອນ. ຖ້າຫາກເປັນການກະທຳຜິດທາງອາຍາຕ້ອງດຳເນີນຄະດີຕາມກົດໝາຍ;
5. ສັ່ງໃຫ້ປ່ອຍຕົວບຸກຄົນທີ່ຖືກກັກຕົວ, ຖືກຈັບຕົວ, ຖືກກັກຂັງ, ຖືກດັດສ້າງ, ຖືກປະຕິບັດມາດຕະການບັງຄັບອື່ນໆຂອງສານ ທີ່ບໍ່ຖືກຕ້ອງຕາມກົດໝາຍໃນທັນໃດ;
6. ກວດກາຄຳສັ່ງ ແລະ ລະບຽບການຕ່າງໆຂອງຄະນະຮັບຜິດຊອບສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ ເພື່ອໃຫ້ສອດຄ່ອງກັບກົດໝາຍ ແລະ ໃຫ້ຄະນະຮັບຜິດຊອບດັ່ງກ່າວ ອະທິບາຍເຫດຜົນຂອງການລະເມີດກົດໝາຍ;

   ຄະນະຮັບຜິດຊອບສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງຕ້ອງ

ປະຕິບັດຕາມຄໍາສັ່ງຂອງໄອຍະການປະຊາຊົນ ກ່ຽວກັບການເຄົາລົບລະບຽບການກັກຕົວ, ການກັກຂັງ, ການດັດສ້າງ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

7. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມທີ່ກົດໝາຍໄດ້ກໍານົດໄວ້.

**ມາດຕາ 18. ຄວາມຮັບຜິດຊອບໃນການສົ່ງຄໍາສະເໜີ, ຄໍາຮ້ອງທຸກຂອງຜູ້ກະທໍາຜິດທີ່ສົ່ງເຖິງໄອຍະການປະຊາຊົນ**

ຄໍາສະເໜີ, ຄໍາຮ້ອງທຸກຂອງຜູ້ຕ້ອງຫາ, ຈໍາເລີຍ, ນັກໂທດ, ຜູ້ຖືກດັດສ້າງ ທີ່ສົ່ງເຖິງໄອຍະການປະຊາຊົນນັ້ນ ຄະນະຮັບຜິດຊອບສະຖານທີ່ກັກຂັງ, ສູນດັດສ້າງ ແລະ ຄ້າຍດັດສ້າງ ຕ້ອງສົ່ງໃຫ້ໄອຍະການປະຊາຊົນ ພາຍໃນສີ່ສິບແປດຊົ່ວໂມງ ນັບແຕ່ເວລາທີ່ໄດ້ຮັບເປັນຕົ້ນໄປ.

## ພາກທີ III ການຄົ້ນຄວ້າໃຫ້ອະໄພຍະໂທດແກ່ນັກໂທດ

**ມາດຕາ 19 . ສິດ ແລະ ໜ້າທີ່ຂອງໄອຍະການປະຊາຊົນສູງສຸດ ກ່ຽວກັບການຄົ້ນຄວ້າສະເໜີການໃຫ້ອະໄພຍະໂທດແກ່ນັກໂທດ**

ໃນການຄົ້ນຄວ້າການໃຫ້ອະໄພຍະໂທດແກ່ນັກໂທດ, ໄອຍະການປະຊາຊົນສູງສຸດມີສິດ ແລະ ໜ້າທີ່ດັ່ງນີ້:

1. ແຕ່ງຕັ້ງຄະນະຮັບຜິດຊອບ ການຄົ້ນຄວ້າສະເໜີໃຫ້ອະໄພຍະໂທດແກ່ນັກໂທດຂັ້ນສູນ ກາງ, ແຂວງ ແລະ ນະຄອນ;
2. ຄົ້ນຄວ້າວາງລະບຽບການ ແລະ ອອກຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະ ແຈ້ງການກ່ຽວກັບການໃຫ້ອະໄພຍະໂທດແກ່ນັກໂທດ;
3. ຊີ້ນໍາ, ນໍາພາການຄົ້ນຄວ້າສັງລວມບັນຊີລາຍຊື່ນັກໂທດ ຜູ້ທີ່ມີເງື່ອນໄຂໄດ້ຮັບການອະໄພຍະໂທດ ເພື່ອສະເໜີຕໍ່ຄະນະປະຈໍາສະພາແຫ່ງຊາດ ພິຈາລະນາສະເໜີຕໍ່ປະທານປະເທດ.

## ພາກທີ IV ລະບົບການຈັດຕັ້ງອົງການໄອຍະການປະຊາຊົນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ມາດຕາ 20. ລະບົບການຈັດຕັ້ງອົງການໄອຍະການປະຊາຊົນ**

ລະບົບການຈັດຕັ້ງອົງການໄອຍະການປະຊາຊົນປະກອບດ້ວຍ:

ອົງການໄອຍະການປະຊາຊົນສູງສຸດ;

ອົງການໄອຍະການປະຊາຊົນຂັ້ນອຸທອນ;

ອົງການໄອຍະການປະຊາຊົນແຂວງ, ນະຄອນ;

ອົງການໄອຍະການປະຊາຊົນເມືອງ, ເທດສະບານ;

ອົງການໄອຍະການທະຫານ.

ອົງການໄອຍະການປະຊາຊົນຂັ້ນອຸທອນ, ອົງການໄອຍະການປະຊາຊົນແຂວງ, ນະຄອນ ແລະ ອົງການໄອຍະການປະຊາຊົນເມືອງ, ເທດສະບານ ເອີ້ນວ່າອົງການໄອຍະການປະຊາຊົນທ້ອງຖິ່ນ.

ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການໄອຍະການທະຫານ ກຳນົດໄວ້ໃນນິຕິກຳສະເພາະ.

## ໝວດທີ I ອົງການໄອຍະການປະຊາຊົນສູງສຸດ

### ມາດຕາ 21. ທີ່ຕັ້ງ ແລະ ພາລະບົດບາດຂອງອົງການໄອຍະການປະຊາຊົນສູງສຸດ

ອົງການໄອຍະການປະຊາຊົນສູງສຸດ ແມ່ນອົງການຕິດຕາມກວດກາສູງສຸດ ຂອງລະບົບອົງການໄອຍະການປະຊາຊົນແຫ່ງ ສປປລາວ, ມີພາລະບົດບາດຊີ້ນຳ, ນຳພາອົງການໄອຍະການປະຊາຊົນທຸກຂັ້ນ ໃນການຕິດຕາມກວດກາການປະຕິບັດກົດໝາຍໃຫ້ຖືກຕ້ອງ ແລະ ເປັນເອກະພາບໃນທົ່ວປະເທດ.

### ມາດຕາ 22. ສະຖານທີ່ຕັ້ງອົງການໄອຍະການປະຊາຊົນສູງສຸດ

ອົງການໄອຍະການປະຊາຊົນສູງສຸດຕັ້ງຢູ່ນະຄອນຫຼວງວຽງຈັນ.

### ມາດຕາ 23. ໂຄງປະກອບຂອງອົງການໄອຍະການປະຊາຊົນສູງສຸດ

ອົງການໄອຍະການປະຊາຊົນສູງສຸດປະກອບດ້ວຍ:

ໄອຍະການປະຊາຊົນສູງສຸດ;

ບັນດາຮອງໄອຍະການປະຊາຊົນສູງສຸດ,

ບັນດາພະນັກງານສອບສວນ;

ກົງຈັກຊ່ວຍວຽກ.

### ມາດຕາ 24. ສິດ ແລະ ໜ້າທີ່ຂອງອົງການໄອຍະການປະຊາຊົນສູງສຸດ

ອົງການໄອຍະການປະຊາຊົນສູງສຸດມີສິດ ແລະ ໜ້າທີ່ດັ່ງນີ້:

1. ຕິດຕາມກວດກາການປະຕິບັດກົດໝາຍໃນຂອບເຂດທົ່ວປະເທດ;
2. ຄຸ້ມຄອງທາງດ້ານການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການໄອຍະການປະຊາຊົນທ້ອງຖິ່ນ;
3. ສ້າງແຜນບຳລຸງ ແລະ ຍົກລະດັບພະນັກງານອົງການໄອຍະການປະຊາຊົນ;
4. ຄົ້ນຄວ້າ ແລະ ສັງລວມການລາຍງານ ກ່ຽວກັບການເຄື່ອນໄຫວວຽກງານຂອງອົງການໄອຍະການປະຊາຊົນ, ວຽກງານສະຖິຕິຄະດີ, ຜູ້ຕ້ອງຫາ ແລະ ນັກໂທດ ໃນທົ່ວປະເທດ;
5. ແນະນຳທາງດ້ານກົດໝາຍ ແລະ ສະໜອງຂໍ້ມູນຂ່າວສານທາງດ້ານກົດໝາຍ ໃຫ້ອົງການໄອຍະການປະຊາຊົນທ້ອງຖິ່ນ ແລະອົງການໄອຍະການທະຫານ;
6. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານໄອຍະການ ແລະ ກົດໝາຍ;
7. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມທີ່ກົດໝາຍໄດ້ກຳນົດໄວ້.

**ມາດຕາ 25. ການເລືອກຕັ້ງ ຫຼື ປົດຕຳແໜ່ງໄອຍະການປະຊາຊົນສູງສຸດ**

ໄອຍະການປະຊາຊົນສູງສຸດຖືກເລືອກຕັ້ງ ຫຼື ປົດຕຳແໜ່ງໂດຍສະພາແຫ່ງຊາດ ຕາມການສະເໜີຂອງປະທານປະເທດ.

ອາຍຸການຂອງໄອຍະການປະຊາຊົນສູງສຸດເທົ່າກັບອາຍຸການຂອງສະພາແຫ່ງຊາດ.

**ມາດຕາ 26. ສິດ ແລະ ໜ້າທີ່ຂອງໄອຍະການປະຊາຊົນສູງສຸດ**

ໄອຍະການປະຊາຊົນສູງສຸດມີສິດ ແລະ ໜ້າທີ່ດັ່ງນີ້:

1. ຊີ້ນຳ ແລະ ກວດກາອົງການໄອຍະການປະຊາຊົນແຕ່ລະຂັ້ນ;
2. ສະເໜີຮື້ຟື້ນຄະດີຕໍ່ສານປະຊາຊົນສູງສຸດ ໃນກໍລະນີທີ່ພົບເຫັນຂໍ້ມູນ ຫຼື ຫຼັກຖານໃໝ່;
3. ໃຫ້ຄວາມເຫັນກ່ຽວກັບການດຳເນີນຄະດີອາຍາ ຊຶ່ງໄອຍະການປະຊາຊົນຖືກຫາວ່າກະທຳຜິດ;
4. ຊີ້ນຳວຽກງານຄົ້ນຄວ້າ ແລະ ສະເໜີການໃຫ້ອະໄພຍະໂທດແກ່ນັກໂທດ;
5. ຊີ້ນຳວຽກງານຄົ້ນຄວ້າ ແລະ ສະເໜີຮ່າງກົດໝາຍ ແລະ ນິຕິກຳອື່ນໆຕໍ່ສະພາແຫ່ງຊາດ ຫຼື ຕໍ່ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ;
6. ສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ຕີຄວາມໝາຍຂອງກົດໝາຍ ເພື່ອປະຕິບັດໃຫ້ຖືກຕ້ອງ ແລະ ເປັນເອກະພາບ;
7. ສະເໜີປະທານປະເທດແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຮອງໄອຍະການປະຊາຊົນສູງສຸດ;
8. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງບັນດາໄອຍະການປະຊາຊົນທ້ອງຖິ່ນ, ພະນັກງານສອບສວນ ແລະ ພະນັກງານອື່ນໆພາຍໃນອົງການໄອຍະການປະຊາຊົນ;
9. ບຳລຸງສ້າງພະນັກງານອົງການໄອຍະການປະຊາຊົນ;
10. ລາຍງານສະພາບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງອົງການໄອຍະການປະຊາຊົນ ຕໍ່ສະພາແຫ່ງຊາດ ຫຼື ຄະນະປະຈຳສະພາແຫ່ງຊາດ ໃນເວລາທີ່ສະພາແຫ່ງຊາດບໍ່ໄດ້ເປີດກອງປະຊຸມ;
11. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມທີ່ກົດໝາຍໄດ້ກຳນົດໄວ້.

**ມາດຕາ 27. ຮອງໄອຍະການປະຊາຊົນສູງສຸດ**

ຮອງໄອຍະການປະຊາຊົນສູງສຸດຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງໂດຍປະທານປະເທດ ຕາມການສະເໜີຂອງໄອຍະການປະຊາຊົນສູງສຸດ.

ຮອງໄອຍະການປະຊາຊົນສູງສຸດ ມີໜ້າທີ່ຊ່ວຍວຽກໄອຍະການປະຊາຊົນສູງສຸດໃນການປະຕິບັດໜ້າທີ່ ແລະ ຈະໄດ້ຮັບຜິດຊອບວຽກງານໃດໜຶ່ງສະເພາະ ຕາມການມອບໝາຍຂອງໄອຍະການປະຊາຊົນສູງສຸດ.

ໃນເວລາທີ່ໄອຍະການປະຊາຊົນສູງສຸດຕິດຂັດ ແມ່ນຮອງໄອຍະການປະຊາຊົນສູງສຸດ ຜູ້ທີ່ໄດ້ຮັບມອບໝາຍນັ້ນ ເປັນຜູ້ວ່າການແທນ.

**ມາດຕາ 28. ໂຄງປະກອບກົງຈັກຂອງອົງການໄອຍະການປະຊາຊົນສູງສຸດ**

ເພື່ອຮັບປະກັນການປະຕິບັດໜ້າທີ່ ແລະ ການເຄື່ອນໄຫວວຽກງານຂອງຕົນ ອົງການໄອຍະການປະຊາຊົນສູງສຸດມີກົງຈັກຊ່ວຍວຽກຄື:

ຫ້ອງການ;

ກົມຈັດຕັ້ງ-ພະນັກງານ;

ກົມກວດກາທົ່ວໄປ;

ກົມກວດກາຄະດີອາຍາ;

ກົມກວດກາຄະດີແພ່ງ;

ກົມກວດກາຄ້າຍດັດສ້າງ.

ໃນກໍລະນີທີ່ມີຄວາມຈຳເປັນ ກໍອາດຈະສ້າງຕັ້ງກົມເພີ່ມຕື່ມ ຫຼື ຍຸບກົມໃດໜຶ່ງກໍໄດ້.

ໂຄງປະກອບການຈັດຕັ້ງ, ຈຳນວນພົນ ແລະການເຄື່ອນໄຫວຂອງກົງຈັກຊ່ວຍວຽກ ໄດ້ກຳນົດໄວ້ໃນລະບຽບການພາຍໃນ ຂອງອົງການໄອຍະການປະຊາຊົນສູງສຸດ.

## ໝວດທີ II ອົງການໄອຍະການປະຊາຊົນຂັ້ນອຸທອນ

**ມາດຕາ 29. ທີ່ຕັ້ງ ແລະ ພາລະບົດບາດຂອງອົງການໄອຍະການປະຊາຊົນຂັ້ນອຸທອນ**

ອົງການໄອຍະການປະຊາຊົນຂັ້ນອຸທອນ ແມ່ນອົງການໜຶ່ງ ໃນລະບົບອົງການໄອຍະການປະຊາຊົນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ມີພາລະບົດບາດຕິດຕາມກວດກາການປະຕິບັດກົດໝາຍໃຫ້ຖືກຕ້ອງ ແລະ ເປັນເອກະພາບ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 30. ການສ້າງຕັ້ງອົງການໄອຍະການປະຊາຊົນຂັ້ນອຸທອນ**

ອົງການໄອຍະການປະຊາຊົນຂັ້ນອຸທອນ ສ້າງຕັ້ງຂຶ້ນຢູ່ພາກເໜືອ, ພາກກາງ ແລະ ພາກໃຕ້ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ບັນດາແຂວງ, ນະຄອນ ທີ່ຂຶ້ນກັບໄອຍະການປະຊາຊົນຂັ້ນອຸທອນ ແລະ ບ່ອນສ້າງຕັ້ງອົງການໄອຍະການປະຊາຊົນຂັ້ນອຸທອນໃນແຕ່ລະພາກນັ້ນ ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 31. ໂຄງປະກອບຂອງອົງການໄອຍະການປະຊາຊົນຂັ້ນອຸທອນ**

ອົງການໄອຍະການປະຊາຊົນຂັ້ນອຸທອນປະກອບດ້ວຍ:

ໄອຍະການປະຊາຊົນຂັ້ນອຸທອນ;

ບັນດາຮອງໄອຍະການປະຊາຊົນຂັ້ນອຸທອນ;

ບັນດາພະນັກງານສອບສວນ;

ກົງຈັກຊ່ວຍວຽກ.

**ມາດຕາ 32. ສິດ ແລະ ໜ້າທີ່ຂອງອົງການໄອຍະການປະຊາຊົນຂັ້ນອຸທອນ**

ອົງການໄອຍະການປະຊາຊົນຂັ້ນອຸທອນມີສິດ ແລະ ໜ້າທີ່ດັ່ງນີ້:

1. ຕິດຕາມກວດກາການປະຕິບັດກົດໝາຍໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
2. ຄຸ້ມຄອງທາງດ້ານການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການໄອຍະການປະຊາຊົນແຂວງ, ນະຄອນ ທີ່ຂຶ້ນກັບຕົນ;
3. ຄົ້ນຄ້ວາ ແລະ ສັງລວມການລາຍງານ ກ່ຽວກັບການປະຕິບັດວຽກງານຂອງອົງການໄອຍະການປະຊາຊົນແຂວງ, ນະຄອນ ທີ່ຂຶ້ນກັບຕົນ, ວຽກງານສະຖິຕິຄະດີ, ຜູ້ຕ້ອງຫາ ແລະ ນັກໂທດໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
4. ແນະນຳ ແລະ ສະໜອງຂໍ້ມູນຂ່າວສານທາງດ້ານກົດໝາຍ ໃຫ້ແກ່ອົງການໄອຍະການປະຊາຊົນແຂວງ, ນະຄອນ ທີ່ຂຶ້ນກັບຕົນ;
5. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມທີ່ກົດໝາຍໄດ້ກຳນົດໄວ້.

**ມາດຕາ 33. ສິດ ແລະ ໜ້າທີ່ຂອງໄອຍະການປະຊາຊົນຂັ້ນອຸທອນ**

ໄອຍະການປະຊາຊົນຂັ້ນອຸທອນມີສິດ ແລະ ໜ້າທີ່ດັ່ງນີ້:

1. ຊີ້ນຳ ແລະ ກວດກາການຈັດຕັ້ງປະຕິບັດໜ້າທີ່ວຽກງານ ຂອງອົງການໄອຍະການປະຊາຊົນຂັ້ນຂອງຕົນ ແລະ ອົງການໄອຍະການປະຊາຊົນແຂວງ, ນະຄອນ ທີ່ຂຶ້ນກັບຕົນ;
2. ລາຍງານສະພາບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງໄອຍະການປະຊາຊົນຂັ້ນອຸທອນ ຕໍ່ໄອຍະການປະຊາຊົນສູງສຸດ;
3. ແນະນຳທາງດ້ານວິຊາການ ຕໍ່ອົງການໄອຍະການປະຊາຊົນແຂວງ, ນະຄອນ ທີ່ຂຶ້ນກັບຕົນ;
4. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມທີ່ກົດໝາຍໄດ້ກຳນົດໄວ້.

**ມາດຕາ 34. ຮອງໄອຍະການປະຊາຊົນຂັ້ນອຸທອນ**

ຮອງໄອຍະການປະຊາຊົນຂັ້ນອຸທອນ ມີໜ້າທີ່ຊ່ວຍວຽກໄອຍະການປະຊາຊົນຂັ້ນອຸທອນ ໃນການປະຕິບັດໜ້າທີ່ ແລະ ຈະໄດ້ຮັບຜິດຊອບວຽກງານໃດໜຶ່ງສະເພາະ ຕາມການມອບໝາຍຂອງໄອຍະການປະຊາຊົນຂັ້ນອຸທອນ.

ໃນກໍລະນີທີ່ໄອຍະການປະຊາຊົນຂັ້ນອຸທອນຕິດຂັດ ແມ່ນຮອງໄອຍະການປະຊາຊົນຂັ້ນອຸທອນຜູ້ທີ່ໄດ້ຮັບມອບໝາຍນັ້ນ ເປັນຜູ້ວ່າການແທນ.

**ມາດຕາ 35. ກົງຈັກຊ່ວຍວຽກຂອງອົງການໄອຍະການປະຊາຊົນຂັ້ນອຸທອນ**

ເພື່ອຮັບປະກັນການປະຕິບັດໜ້າທີ່ວຽກງານຂອງຕົນ ອົງການໄອຍະການປະຊາຊົນຂັ້ນອຸທອນມີກົງຈັກຊ່ວຍວຽກຄື: ຫ້ອງການ ແລະ ພະແນກຈຳນວນໜຶ່ງ.

ໂຄງປະກອບການຈັດຕັ້ງ, ກົງຈັກຊ່ວຍວຽກ ແລະ ຈຳນວນພົນຂອງອົງການໄອຍະການປະຊາຊົນຂັ້ນອຸທອນ ແມ່ນໄອຍະການປະຊາຊົນສູງສຸດເປັນຜູ້ກຳນົດ.

## ໝວດທີ III ອົງການໄອຍະການປະຊາຊົນແຂວງ, ນະຄອນ

**ມາດຕາ 36. ທີ່ຕັ້ງ ແລະ ພາລະບົດບາດຂອງອົງການໄອຍະການປະຊາຊົນແຂວງ, ນະຄອນ**

ອົງການໄອຍະການປະຊາຊົນແຂວງ, ນະຄອນແມ່ນອົງການໜຶ່ງໃນລະບົບອົງການໄອຍະການປະຊາຊົນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ມີພາລະບົດບາດຕິດຕາມກວດກາການປະຕິບັດກົດໝາຍໃຫ້ຖືກຕ້ອງ ແລະ ເປັນເອກະພາບຢູ່ໃນຂອບເຂດແຂວງ, ນະຄອນຂອງຕົນ.

**ມາດຕາ 37. ການສ້າງຕັ້ງອົງການໄອຍະການປະຊາຊົນແຂວງ, ນະຄອນ**

ອົງການໄອຍະການປະຊາຊົນແຂວງ, ນະຄອນສ້າງຕັ້ງຂຶ້ນຢູ່ທຸກແຂວງ, ນະຄອນ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

**ມາດຕາ 38. ໂຄງປະກອບຂອງອົງການໄອຍະການປະຊາຊົນແຂວງ, ນະຄອນ**

ອົງການໄອຍະການປະຊາຊົນແຂວງ, ນະຄອນປະກອບດ້ວຍ:

ໄອຍະການປະຊາຊົນແຂວງ, ນະຄອນ;

ບັນດາຮອງໄອຍະການປະຊາຊົນແຂວງ, ນະຄອນ;

ບັນດາພະນັກງານສອບສວນ;

ກົງຈັກຊ່ວຍວຽກ.

**ມາດຕາ 39. ສິດ ແລະ ໜ້າທີ່ຂອງອົງການໄອຍະການປະຊາຊົນແຂວງ, ນະຄອນ**

ອົງການໄອຍະການປະຊາຊົນແຂວງ, ນະຄອນມີສິດ ແລະ ໜ້າທີ່ດັ່ງນີ້:

1. ຕິດຕາມກວດກາການປະຕິບັດກົດໝາຍໃນຂອບເຂດແຂວງ, ນະຄອນ ຂອງຕົນ;
2. ຄຸ້ມຄອງທາງດ້ານການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການໄອຍະການປະຊາຊົນເມືອງ, ເທດສະບານ ທີ່ຂຶ້ນກັບຕົນ;
3. ຄົ້ນຄ້ວາ ແລະ ສັງລວມ ການລາຍງານກ່ຽວກັບການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງອົງການໄອຍະການປະຊາຊົນເມືອງ, ເທດສະບານ ທີ່ຂຶ້ນກັບຕົນ, ວຽກງານສະຖິຕິຄະດີ, ຜູ້ຕ້ອງຫາ ແລະ ນັກໂທດ ໃນຂອບເຂດແຂວງ, ນະຄອນ;
4. ແນະນຳ ແລະ ສະໜອງຂໍ້ມູນຂ່າວສານທາງດ້ານກົດໝາຍ ໃຫ້ແກ່ອົງການໄອຍະການປະຊາຊົນເມືອງ, ເທດສະບານ ທີ່ຂຶ້ນກັບຕົນ;
5. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມທີ່ກົດໝາຍໄດ້ກຳນົດໄວ້.

**ມາດຕາ 40. ສິດ ແລະ ໜ້າທີ່ຂອງໄອຍະການປະຊາຊົນແຂວງ, ນະຄອນ**

ໄອຍະການປະຊາຊົນແຂວງ, ນະຄອນມີສິດ ແລະ ໜ້າທີ່ດັ່ງນີ້:

1. ຊີ້ນຳ ແລະ ກວດກາການຈັດຕັ້ງປະຕິບັດໜ້າທີ່ວຽກງານ ຂອງອົງການໄອຍະການ

ປະຊາຊົນຂັ້ນຂອງຕົນ ແລະ ອົງການໄອຍະການປະຊາຊົນເມືອງ, ເທດສະບານທີ່ຂຶ້ນກັບຕົນ;

2. ລາຍງານສະພາບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງຕົນ ຕໍ່ໄອຍະການປະຊາຊົນຂັ້ນອຸທອນທີ່ຕົນຂຶ້ນກັບ;
3. ແນະນຳທາງດ້ານວິຊາການ ຕໍ່ອົງການໄອຍະການປະຊາຊົນເມືອງ, ເທດສະບານທີ່ຂຶ້ນກັບຕົນ;
4. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມທີ່ກົດໝາຍໄດ້ກຳນົດໄວ້.

**ມາດຕາ 41. ຮອງໄອຍະການປະຊາຊົນແຂວງ, ນະຄອນ**

ຮອງໄອຍະການປະຊາຊົນແຂວງ, ນະຄອນມີໜ້າທີ່ຊ່ວຍວຽກໄອຍະການປະຊາຊົນແຂວງ, ນະຄອນໃນການປະຕິບັດໜ້າທີ່ ແລະ ຈະໄດ້ຮັບຜິດຊອບວຽກງານໃດໜຶ່ງສະເພາະ ຕາມການມອບໝາຍຂອງໄອຍະການປະຊາຊົນແຂວງ, ນະຄອນ.

ໃນກໍລະນີທີ່ໄອຍະການປະຊາຊົນແຂວງ, ນະຄອນ ຕິດຂັດ ແມ່ນຮອງໄອຍະການປະຊາຊົນແຂວງ, ນະຄອນ ຜູ້ທີ່ໄດ້ຮັບມອບໝາຍນັ້ນ ເປັນຜູ້ວ່າການແທນ.

**ມາດຕາ 42. ກົງຈັກຊ່ວຍວຽກຂອງອົງການໄອຍະການປະຊາຊົນແຂວງ, ນະຄອນ**

ເພື່ອຮັບປະກັນການປະຕິບັດໜ້າທີ່ວຽກງານຂອງຕົນ ອົງການໄອຍະການປະຊາຊົນແຂວງ, ນະຄອນມີກົງຈັກຊ່ວຍວຽກຄື: ຫ້ອງການ ແລະ ໜ່ວຍງານຈຳນວນໜຶ່ງ.

ໂຄງປະກອບການຈັດຕັ້ງ, ກົງຈັກຊວ່ຍວຽກ ແລະ ຈຳນວນພົນຂອງອົງການໄອຍະການປະຊາຊົນແຂວງ, ນະຄອນ ແມ່ນໄອຍະການປະຊາຊົນສູງສຸດເປັນຜູ້ກຳນົດ.

## ໝວດທີ IV ອົງການໄອຍະການປະຊາຊົນເມືອງ, ເທດສະບານ

**ມາດຕາ 43. ທີ່ຕັ້ງ ແລະ ພາລະບົດບາດຂອງອົງການໄອຍະການປະຊາຊົນເມືອງ, ເທດສະບານ**

ອົງການໄອຍະການປະຊາຊົນເມືອງ, ເທດສະບານ ແມ່ນອົງການໜຶ່ງໃນລະບົບອົງການໄອຍະການປະຊາຊົນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ມີພາລະບົດບາດຕິດຕາມກວດກາການປະຕິບັດກົດໝາຍໃຫ້ຖືກຕ້ອງ ແລະ ເປັນເອກະພາບຢູ່ໃນຂອບເຂດເມືອງ, ເທດສະບານຂອງຕົນ.

**ມາດຕາ 44. ການສ້າງຕັ້ງອົງການໄອຍະການປະຊາຊົນເມືອງ, ເທດສະບານ**

ອົງການໄອຍະການປະຊາຊົນເມືອງ, ເທດສະບານຕັ້ງຢູ່ໃນແຕ່ລະເມືອງ, ເທດສະບານ.

ໃນກໍລະນີທີ່ເມືອງ, ເທດສະບານໃດໜຶ່ງ ຫາກບໍ່ທັນສາມາດສ້າງຕັ້ງອົງການໄອຍະການປະຊາຊົນຂຶ້ນໄດ້ນັ້ນ ໄອຍະການປະຊາຊົນສູງສຸດ ມີສິດອອກຂໍ້ຕົກລົງມອບອຳນາດໃຫ້ອົງການໄອຍະການປະຊາຊົນເມືອງ, ເທດສະບານ ໃກ້ຄຽງຮັບຜິດຊອບເມືອງ, ເທດສະບານ ດັ່ງກ່າວຊົ່ວຄາວ.

**ມາດຕາ 45. ໂຄງປະກອບຂອງອົງການໄອຍະການປະຊາຊົນເມືອງ, ເທດສະບານ**

ອົງການໄອຍະການປະຊາຊົນເມືອງ, ເທດສະບານປະກອບດ້ວຍ:

ໄອຍະການປະຊາຊົນເມືອງ, ເທດສະບານ;

ຮອງໄອຍະການປະຊາຊົນເມືອງ, ເທດສະບານ;

ພະນັກງານສອບສວນ;

ກົງຈັກຊ່ວຍວຽກ.

**ມາດຕາ 46. ສິດ ແລະ ໜ້າທີ່ຂອງອົງການໄອຍະການປະຊາຊົນເມືອງ, ເທດສະບານ**

ອົງການໄອຍະການປະຊາຊົນເມືອງ, ເທດສະບານມີສິດ ແລະ ໜ້າທີ່ດັ່ງນີ້:

1. ຕິດຕາມກວດກາການປະຕິບັດກົດໝາຍໃນຂອບເຂດເມືອງ, ເທດສະບານຂອງຕົນ;
2. ຄົ້ນຄວ້າ ແລະ ສັງລວມການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຕົນ, ສະຖິຕິຄະດີ, ຜູ້ຕ້ອງຫາໃນຂອບເຂດເມືອງ, ເທດສະບານ;
3. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມທີ່ກົດໝາຍໄດ້ກຳນົດໄວ້.

**ມາດຕາ 47. ສິດ ແລະ ໜ້າທີ່ຂອງໄອຍະການປະຊາຊົນເມືອງ, ເທດສະບານ**

ໄອຍະການປະຊາຊົນເມືອງ, ເທດສະບານມີສິດ ແລະ ໜ້າທີ່ດັ່ງນີ້:

1. ຊີ້ນຳ ແລະ ກວດກາການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງອົງການໄອຍະການປະຊາຊົນຂັ້ນຂອງຕົນ;
2. ລາຍງານສະພາບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງຕົນ ຕໍ່ໄອຍະການປະຊາຊົນແຂວງ, ນະຄອນ ທີ່ຕົນຂຶ້ນກັບ;
3. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ກົດໝາຍໄດ້ກຳນົດໄວ້.

**ມາດຕາ 48. ຮອງໄອຍະການປະຊາຊົນເມືອງ, ເທດສະບານ**

ຮອງໄອຍະການປະຊາຊົນເມືອງ, ເທດສະບານ ມີໜ້າທີ່ຊ່ວຍວຽກໄອຍະການປະຊາຊົນເມືອງ, ເທດສະບານ ແລະ ຮັບຜິດຊອບວຽກງານໃດໜຶ່ງສະເພາະ ຕາມການມອບໝາຍຂອງໄອຍະການປະຊາຊົນເມືອງ, ເທດສະບານ. ໃນເວລາໄອຍະການປະຊາຊົນເມືອງ, ເທດສະບານຕິດຂັດ ແມ່ນຮອງໄອຍະການປະຊາຊົນເມືອງ, ເທດສະບານ ເປັນຜູ້ວ່າການແທນ.

**ມາດຕາ 49. ກົງຈັກຊ່ວຍວຽກຂອງອົງການໄອຍະການປະຊາຊົນເມືອງ, ເທດສະບານ**

ກົງຈັກຊ່ວຍວຽກຂອງອົງການໄອຍະການປະຊາຊົນເມືອງ, ເທດສະບານ ແມ່ນເລຂານຸການ.

ໂຄງປະກອບການຈັດຕັ້ງ, ກົງຈັກຊ່ວຍວຽກ ແລະ ຈຳນວນພົນ ຂອງອົງການໄອຍະການປະຊາ ຊົນເມືອງ, ເທດສະບານ ແມ່ນໄອຍະການປະຊາຊົນສູງ ສຸດເປັນຜູ້ກຳນົດ.

## ພາກທີ V ໄອຍະການ ແລະ ພະນັກງານສອບສວນ

### ມາດຕາ 50. ເງື່ອນໄຂ ແລະ ມາດຕະຖານຂອງໄອຍະການປະຊາຊົນ ແລະ ພະນັກງານສອບສວນ

ພະນັກງານທີ່ຈະຖືກແຕ່ງຕັ້ງໃຫ້ເປັນໄອຍະການປະຊາຊົນ ແລະ ພະນັກງານສອບສວນ ຕ້ອງມີເງື່ອນໄຂ ແລະ ມາດຕະຖານລວມດັ່ງນີ້:

1. ເປັນພົນລະເມືອງລາວທີ່ມີອາຍຸແຕ່ 25 ປີຂຶ້ນໄປ;
2. ເປັນຜູ້ມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນ;
3. ເປັນຜູ້ມີຄຸນສົມບັດດີ, ມີຄວາມຈົງຮັກພັກດີຕໍ່ຜົນປະໂຫຍດລວມຂອງຊາດ, ມີຈັນຍາທຳ;
4. ເປັນຜູ້ໄດ້ຮັບການສຶກສາວິຊາກົດໝາຍ ຫຼື ບຳລຸງວິຊາກົດໝາຍ;
5. ເປັນຜູ້ທີ່ມີສຸຂະພາບສົມບູນດີ.

ສຳລັບເງື່ອນໄຂ, ມາດຕະຖານ, ລະດັບຊັ້ນລະອຽດ ຂອງໄອຍະການປະຊາຊົນ ແລະ ພະນັກງານສອບສວນ ທີ່ບັນຈຸເຂົ້າໃນອົງການໄອຍະການປະຊາຊົນແຕ່ລະຂັ້ນ ກຳນົດໄວ້ໃນລະບຽບການສະເພາະ.

### ມາດຕາ 51. ສິດ ແລະ ໜ້າທີ່ຂອງພະນັກງານສອບສວນ

ພະນັກງານສອບສວນມີສິດ ແລະ ໜ້າທີ່ດັ່ງນີ້:

1. ດຳເນີນການສືບສວນ-ສອບສວນຄະດີ ຕາມການມອບໝາຍຂອງໄອຍະການປະຊາຊົນ;
2. ຄົ້ນຄວ້າສະຫຼຸບສຳນວນຄະດີ, ເຮັດຄຳຖະແຫຼງ ຫຼື ຄຳຕົກລົງຂອງໄອຍະການ ຕາມການມອບໝາຍ;
3. ເອົາຄຳໃຫ້ການຂອງໂຈດ, ຈຳເລີຍ ແລະ ບຸກຄົນອື່ນໆທີ່ເຂົ້າຮ່ວມໃນການດຳເນີນຄະດີ;
4. ເກັບກຳຂໍ້ມູນຫຼັກຖານກ່ຽວກັບຄະດີ;
5. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມທີ່ກົດໝາຍໄດ້ກຳນົດໄວ້.

## ພາກທີ VI ງົບປະມານ, ເຄື່ອງແບບ, ກາໝາຍ, ບັດປະຈຳຕົວ ແລະ ຕາປະທັບຂອງອົງການໄອຍະການປະຊາຊົນ

### ມາດຕາ 52. ງົບປະມານຂອງອົງການໄອຍະການປະຊາຊົນ

ງົບປະມານຂອງອົງການໄອຍະການປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນຂັ້ນອຸທອນ ແມ່ນໄອຍະການປະຊາຊົນສູງສຸດ ເປັນຜູ້ສ້າງແຜນການ ແລ້ວສະເໜີໃຫ້ລັດຖະບານ ເພື່ອນຳສະເໜີຕໍ່ສະພາແຫ່ງຊາດ ພິຈາລະນາ.

ງົບປະມານຂອງໄອຍະການປະຊາຊົນແຂວງ, ນະຄອນ ແລະໄອຍະການປະຊາຊົນເມືອງ, ເທດສະບານ ແມ່ນໄອຍະການປະຊາຊົນແຂວງ, ນະຄອນ ແລະ ໄອຍະການປະຊາຊົນເມືອງ, ເທດສະບານ ເປັນຜູ້ສ້າງແຜນ ເພື່ອສະເໜີໃຫ້ອົງການປົກຄອງຂັ້ນຂອງຕົນ ພິຈາລະນາ.

ງົບປະມານຂອງອົງການໄອຍະການທະຫານ ໃຫ້ຂຶ້ນກັບກະຊວງປ້ອງກັນປະເທດ.

**ມາດຕາ 53. ບັດປະຈຳຕົວ, ກາໝາຍ ແລະ ເຄື່ອງແບບຂອງໄອຍະການປະຊາຊົນ**

ບັດປະຈຳຕົວ, ກາໝາຍ ແລະ ເຄື່ອງແບບຂອງອົງການໄອຍະການປະຊາຊົນ ແມ່ນຄະນະປະຈຳສະພາແຫ່ງຊາດເປັນຜູ້ກຳນົດ.

**ມາດຕາ 54. ຕາປະທັບຂອງອົງການໄອຍະການປະຊາຊົນສູງສຸດ ແລະ ຂອງອົງການໄອຍະການປະຊາຊົນຂັ້ນລຸ່ມ.**

ຕາປະທັບຂອງອົງການໄອຍະການປະຊາຊົນເປັນຮູບວົງມົນຢູ່ກາງວົງມົນມີເຄື່ອງໝາຍຊາດເນື້ອໃນຢູ່ໃນຂອບວົງມົນເບື້ອງເທິງຂຽນວ່າ " ອົງການໄອຍະການປະຊາຊົນສູງສຸດ " ເບື້ອງລຸ່ມຂຽນຊື່ຂອງອົງການໄອຍະການປະຊາຊົນຂັ້ນຂອງຕົນ ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

## ພາກທີ VII ບົດບັນຍັດສຸດທ້າຍ

**ມາດຕາ 55. ການຈັດຕັ້ງປະຕິບັດ**

ອົງການໄອຍະການປະຊາຊົນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 56. ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດນັບແຕ່ວັນປະທານປະເທດແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 31 / ສປສ, ລົງວັນທີ 23 ທັນວາ 1989.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ